**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 2087/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 29/07/2022

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022 ວັນທີ **29 ກໍລະກົດ 2022**, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021, ປະຊຸມເມື່ອວັນທີ 27 ເມສາ 2022. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.519.913.222 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 2: ຮັບຮອງການແຕ່ງຕັ້ງຮັກສາການຜູ້ອຳນວຍການໃຫຍ່ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອາຍຸການຂອງກຳມະການສະພາບໍລິຫານບໍລິສັດຄື: ແຕ່ງຕັ້ງ ທ່ານ ວັນແສງ ວັນນະວົງ ເປັນຮັກສາການຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທັງເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດແທນຜູ້ເກົ່າ ທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022 ເປັນຕົ້ນໄປ.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.519.913.222 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3: ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານຄື: ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ດັ່ງນີ້:

- ຊື່ ແລະ ນາມສະກຸນ: ທ່ານ ວັນແສງ ວັນນະວົງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ບ້ານ ທົ່ງປົ່ງ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

**(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:**

**1. ເຫັນດີ 55 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

**(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:**

**1. ເຫັນດີ 1.519.913.222 ຮຸ້ນ (ສຽງ), ເທົ່າກັບ 90,508538 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

**ຮອງປະທານສະພາບໍລິຫານ**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ຈັນທະບູນ ສຸກອາລຸນ